ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ..2045../ຍທຂ.ສຂ

ສະຫວັນນະເຂດ, ວັນທີ..23.. ..2026

# ໜັງສືແຈ້ງເຊີນເຂົ້າຮ່ວມການປະມູນ

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຄຳແນະນຳກ່ຽວກັບການ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ຂໍ້ຕົກລົງຂອງ ທ່ານເຈົ້າແຂວງສະຫວັນນະເຂດ ສະບັບເລກທີ 1491/ສຂ, ລົງວັນທີ 10 ກໍລະກົດ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງ;
- ອີງຕາມ ແຈ້ງການຂອງຫ້ອງວ່າການແຂວງ ເລື່ອງ ທິດຊີ້ນຳກ່ຽວກັບມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສະເໜີຂອງຄະນະກຳມະການປົກຄອງແຂວງ ກ່ຽວກັບແຜນຈັດສັນງົບປະມານກອງທຶນທາງ ປະຈຳປີ 2026 ຂອງແຂວງສະຫວັນນະເຂດ ສະບັບເລກທີ 692/ຫວຂ, ລົງວັນທີ 18 ມີນາ 2026.
- ອີງຕາມ ຄຳເຫັນຂອງຄະນະພະແນກ ໂຍທາທິການ ແລະ ຂົນສົ່ງ ຄັ້ງວັນທີ 18 ມີນາ 2026.

ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ໄດ້ຮັບ ແຈ້ງການຂອງຫ້ອງວ່າການແຂວງ ເລື່ອງ ທິດຊີ້ນຳກ່ຽວກັບມະຕິກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສະເໜີຂອງຄະນະກຳມະການປົກຄອງແຂວງ ກ່ຽວກັບແຜນຈັດສັນງົບປະມານກອງທຶນທາງ ປະຈຳປີ 2026 ຂອງແຂວງສະຫວັນນະເຂດ ສະບັບເລກທີ 692/ຫວຂ, ລົງວັນທີ 18 ມີນາ 2026, ສະນັ້ນ, ຈິ່ງຂໍຖືເປັນກຽດເຊີນບັນດາທ່ານ ບໍລິສັດທີ່ສົນໃຈ ແລະ ມີເງື່ອນໄຂ ເຂົ້າຮ່ວມການແຂ່ງຂັນປະມູນ ວຽກບູລະນະ ແລະ ສ້ອມແປງທາງຫຼວງແຫ່ງຊາດ ແລະ ທາງຫຼວງທ້ອງຖິ່ນ ດ້ວຍທຶນຂອງລັດ ປະຈຳປີ 2026 ຊຶ່ງປະກອບມີທັງໝົດ 05 ໂຄງການ, ນຳໃຊ້ງົບປະມານກອງທຶນທາງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

## ຕາຕະລາງ ສັນຍາ ແລະ ຈຸດທີ່ຕັ້ງຂອງໂຄງການ

| ລ/ດ | ເລກທີສັນຍາ | ເລກເສັ້ນທາງ | ຊື່ໂຄງການ | ລວງຍາວ | ປະເພດໜ້າວຽກ |
|---|---|---|---|---|---|
| ກ | **ກອງທຶນທາງ ວຽກສ້ອມແປງ ທາງຫຼວງແຫ່ງຊາດ** | | | | |
| 1 | SVK01-2026-RM-PM14-NR-01 | NR-9A | ໂຄງການສ້ອມແປງທາງຫຼວງແຫ່ງຊາດເລກ 9A ແຕ່ ແຍກທາງ 13 ໃຕ້, ບ້ານນາຊາຍ, ເມືອງອຸທຸມພອນ ຫາ ບ້ານແກ້ງກະເບົາ, ເມືອງໄຊບູລີ (ກມ 0+000-ກມ 20+000) ໄລຍະທາງ 20.00 ກມ | 20 ກິໂລແມັດ | ທາງປູຢາງ |
| 2 | SVK02-2026-RM-PM14-NR-02 | NR-13S | ໂຄງການສ້ອມແປງທາງຫຼວງແຫ່ງຊາດເລກ 13 ໃຕ້ ແຕ່ ຂົວເຊບັ້ງໄຟ, ຊາຍແດນ ແຂວງຄຳມ່ວນ, ເມືອງໄຊບູລີ ຫາ ບ້ານຫຼັກ 35 ເມືອງຈຳພອນ (ກມ 384+000-ກມ 463+000) ໄລຍະທາງ 79 ກມ | 79 ກິໂລແມັດ | ທາງປູຢາງ |
| 3 | SVK03-2026-RM-PM14-NR-03 | NR-11E | ໂຄງການສ້ອມແປງທາງຫຼວງແຫ່ງຊາດເລກ 11E ແຕ່ ເດີ່ນບານເກົ່າ ບ້ານຈອມແກ້ວ, ນະຄອນໄກສອນພົມວິຫານ ຫາ ເຮືອນຫີນ, ເມືອງໄຊພູທອງ (ກມ 0+000- ກມ 55+100) ໄລຍະທາງ 55.1 ກມ | 55.1 ກິໂລແມັດ | ທາງປູຢາງ |
| ຂ | **ກອງທຶນທາງ ວຽກສ້ອມແປງ ທາງຫຼວງທ້ອງຖິ່ນ** | | | | |
| 1 | CHP05-2026-RM-DN09-PR-05 | PR-6303 | ໂຄງການ ຟື້ນຟູ ແລະ ສ້ອມແປງເສັ້ນທາງເລກທີ PR 6303 ແຕ່ ແຍກທາງເລກ13 ໃຕ້, ບ້ານ ຫຼັກ 35 ຫາ ບ້ານດົງນ້ອຍ, ເມືອງຈຳພອນ (ກມ 0+000 ຫາ ກມ 2+000). (ຂຸດຄົ້ນ) | 2.0 ກິໂລແມັດ | ທາງປູຢາງ |
| 2 | CHP06-2026-RM-DN09-PR-06 | PR-6303 | ໂຄງການ ຟື້ນຟູ ແລະ ສ້ອມແປງເສັ້ນທາງເລກທີ PR 6303 ແຕ່ ເທດສະບານເມືອງຈຳພອນ ຫາ ເມືອງຊົນນະບູລີ (ກມ 19+500 ຫາ ກມ 35+500). (ຕາມຂຸມຮັງໄກ່) | 18.0 ກິໂລແມັດ | ທາງປູຢາງ |

1. ການປະມູນຈະດຳເນີນຕາມຮູບແບບ ແລະ ຂັ້ນຕອນ ການປະມູນເປີດກ້ວາງ (ພາຍໃນ) ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
2. ການປະມູນນີ້ແມ່ນອະນຸຍາດໃຫ້ທຸກໆ ບໍລິສັດ ທີ່ມີເງື່ອນໄຂ, ມີໃບອະນຸຍາດດຳເນີນທຸລະກິດ ກໍ່ສ້າງ, ສ້ອມແປງຂົວທາງ ຖືກຕ້ອງຕາມກົດໝາຍ;
3. ບໍລິສັດ ທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ຕາມທີ່ຢູ່ລຸ່ມນີ້ ໃນໂມງລັດຖະການ: ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ໂທລະສັບ: 020 55199951, E-mail: dpwt.svk@gmail.com;
4. ເອກະສານປະມູນ ສາມາດຊື້ໄດ້ຢູ່ ຂະແໜງຈັດຊື້-ຈັດຈ້າງ, ພະແນກການເງິນແຂວງ ໂທລະສັບ: 020 55656296, ຕາມໂມງລັດຖະການ, ໃນລາຄາ 1,000,000 ກີບ/ຊຸດ (ໜຶ່ງລ້ານກີບ) ໂດຍບໍ່ມີການທົດແທນຄືນ;
5. ເອກະສານປະມູນຕ້ອງສົ່ງເຖິງ ຂະແໜງຂົວທາງ, ພະແນກ ໂຍທາທິການ ແລະ ຂົນສົ່ງ ກ່ອນເວລາ 9:00 ໂມງ ຂອງວັນທີ 28 ເມສາ (04) 2026 ຢູ່ທີ່ຫ້ອງປະຊຸມເບີ 01 ຊັ້ນ 03 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ, ຊອງປະມູນຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຖືກຮັບຮອງ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;
6. ເອກະສານປະມູນ ຕ້ອງປະກອບໜັງສືຄໍ້າປະກັນການປະມູນມາພ້ອມ ຫຼື ດ້ວຍເງິນສົດ, ໜັງສືຄໍ້າປະກັນອອກໂດຍທະນາຄານ ພາຍໃນ ຫຼື ຕ່າງປະເທດ ຫຼື ສະຖາບັນປະກັນໄພ, ໃນມູນຄ່າ (ບໍ່ໃຫ້ຫຼຸດ 2% ຂອງມູນຄ່າຢູ່ເອກະສານການປະມູນ);
7. ຜູ້ສົນໃຈເຂົ້າຮ່ວມປະມູນສາມາດລົງກວດກາສະໜາມຕົວຈິງດ້ວຍຕົນເອງ ຕາມລາຍລະອຽດຂອງແຕ່ລະສັນຍາ ແລະ ກອງປະຊຸມກ່ອນຍື່ນຊອງປະມູນຈະໄດ້ຈັດຂຶ້ນໃນວັນທີ 13 ເມສາ (04) 2026 ຢູ່ທີ່ຫ້ອງປະຊຸມເບີ 01 ຊັ້ນ 3 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງສະຫວັນນະເຂດ ເລີ່ມແຕ່ເວລາ 9:00 ໂມງ ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງຮຽນເຊີນມາຍັງທ່ານ ເພື່ອຊັບຊ້ອນເວລາເຂົ້າຮ່ວມການແຂ່ງຂັນປະມູນຕາມວັນເວລານີ້ດ້ວຍ.

ຫົວໜ້າພະແນກ

ສຸວັນ ແສງຈຳພອນ